# ບໍລິການໄປສະນີທົ່ວປວງຊົນຂອງລາວ (Laos Universal Postal Service)

ການໄປສະນີ ເປັນຊ່ອງທາງການສື່ສານໜຶ່ງທີ່ເກົ່າແກ່ທີ່ສຸດໃນໂລກ ຊຶ່ງມີອິດທິພົນຕໍ່ສັງຄົມໃນອາດີດເປັນຢ່າງສູງ, ຈາກໃນເມື່ອກ່ອນທີ່ມີການສື່ສານກັນສະເພາະກຸ່ມຄົນເກີດຂຶ້ນ ແຕ່ເມື່ອການຄ້າ ແລະການຄົມມະນາຄົມເຕີບໂຕ ເຮັດໃຫ້ເສັ້ນທາງການຄ້າຂະຫຍາຍຕົວອອກໄປໄກ ຄວາມຈຳເປັນໃນການຕິດຕໍ່ສື່ສານຫາກັນຈຶ່ງມີຄວາມສຳຄັນຫຼາຍຂຶ້ນ ຈາກນັ້ນການບໍລິການໄປສະນີກໍໄດ້ຖືກນຳມາໃຊ້ຫຼາຍຂຶ້ນ ໃນການສົ່ງຂ່າວສານຫາກັນໄປຕາມເສັ້ນທາງການຄ້າ ແລະຂະຫຍາຍຕົວອອກຢ່າງກວ້າງຂວາງໃນທົ່ວສັງຄົມ ເຮັດໃຫ້ເກີດມີບໍລິການໄປສະນີຮັບໃຊ້ສັງຄົມນັ້ນໆ ເພື່ອໃຫ້ຜູ້ຄົນເຂົ້າເຖິງໄດ້ຢ່າງທົ່ວເຖິງ ເອີ້ນວ່າ **"ການບໍລິການໄປສະນີທົ່ວປວງຊົນ"**.

**"ການບໍລິການໄປສະນີທົ່ວປວງຊົນ"** ໃນດິນແດນຂອງປະເທດລາວ ໄດ້ມີການເຄື່ອນໄຫວມາຢ່າງຍາວນານຜ່ານຫຼາຍຍຸກຫຼາຍສະໄໝ ຊຶ່ງໄດ້ເລີ່ມດຳເນີນການມາ ແຕ່ສະໄໝຂອງການເຂົ້າມາຍຶດຄອງອິນດູຈີນຂອງຝຣັ່ງເສດ, ພາຍຫຼັງທີ່ຝຣັ່ງເສດ ໄດ້ລວມເອົາປະເທດລາວເຂົ້າເປັນສ່ວນໜຶ່ງຂອງອິນດູຈີນ ໃນປີ 1893 ຊຶ່ງເອີ້ນວ່າ "ແຄ້ວນລາວ". ການປົກຄອງແຄ້ວນລາວຂອງຝຣັ່ງເສດໃນໄລຍະນັ້ນ ມີການບໍລິຫານ ແລະ ດຳເນີນກິດຈະການຫຼາຍຢ່າງ ໃນນັ້ນກໍມີວຽກງານ "ການໄປສະນີໂທລະເລກ"[1] ຊຶ່ງໃນໄລຍະດັ່ງກ່າວຜູ້ອຳນວຍການໄປສະນີໂທລະເລກໃນແຄ້ວນລາວ ມີຕຳແໜ່ງເປັນຮອງອະທິບໍດີກົມໄປສະນີໂທລະເລກ ແຫ່ງຮ່າໂນ້ຍ ສຳນັກງານໃຫຍ່ມີຢູ່ 2 ແຫ່ງ ຄື ທີ່ເມືອງວຽງຈັນແຫ່ງໜຶ່ງ ແລະ ທີ່ເມືອງສະຫວັນນະເຂດແຫ່ງໜຶ່ງ ສະຖານທີ່ທຳການໄປສະນີໂທລະເລກທີ່ເມືອງສະຫວັນນະເຂດເປັນແຫຼ່ງສຳຄັນກວ່າບ່ອນອື່ນ ເພາະເປັນຊຸມທາງແຫ່ງການໂທລະເລກທົ່ວໄປໃນແຄ້ວນລາວ ສະຖານທີ່ທຳການໄປສະນີໂທລະເລກມັກຈະມີທົ່ວໄປໃນທີ່ຕັ້ງແຂວງ ທີ່ຕັ້ງເມືອງ ແລະຕາແສງທີ່ສຳຄັນ ເຖິງແມ່ນວ່າຈະມີລາຍໄດ້ບໍ່ຄຸ້ມລາຍຈ່າຍ ຝ່າຍຝຣັ່ງເສດກໍຈັດຕັ້ງສະຖານທີ່ທຳການໄປສະນີໂທລະເລກຂຶ້ນ ເພື່ອສະດວກໃນການສື່ສານ ເຈົ້າໜ້າທີ່ຊຶ່ງປະຈຳການຢູ່ສະຖານທີ່ທຳການໄປສະນີໂທລະເລກ ຖ້າເປັນທີ່ຕັ້ງແຂວງ ສ່ວນຫຼາຍມັກຈະມີຂ້າລາຊການຄົນຝຣັ່ງເສດທຽບຕຳແໜ່ງຊັ້ນຫົວໜ້າກອງເປັນຫົວໜ້າ ສ່ວນພະນັກງານຮັບສົ່ງໂທລະເລກໂດຍສ່ວນໃຫຍ່ເປັນຄົນຫວຽດນາມ ນອກຈາກຕຳແໜ່ງທີ່ກ່າວມານີ້ແລ້ວ ຍັງມີຕຳແໜ່ງສະມຽນພະນັກງານ ແລະບູລຸດໄປສະນີ. ການຮັບສົ່ງໄປສະນີພັນທາງບົກສ່ວນຫຼາຍແມ່ນໃຊ້ລົດຍົນ ທາງນ້ຳໃຊ້ເຮືອກົນໄຟ ແລະ ເຮືອຍົນ ແລະ ຖືວ່າການສົ່ງໄປສະນີພັນ ເປັນວຽກງານທີ່ສຳຄັນຢ່າງຍິ່ງ ຖ້າເຮືອ ຫຼື ລົດເມໄປສະນີມາຮອດສະຖານທີ່ທຳການໄປສະນີບໍ່ວ່າຈະເປັນເວລາຄ່ຳຄືນເດິກດື່ນປານໃດກໍຕາມ ນາຍໄປສະນີຈະຕ້ອງນຳສົ່ງເຖິງຜູ້ຮັບໂດຍທັນທີ ຖ້າເປັນໜັງສືທຳມະດາ ເມື່ອກາຍເວລາ 21 ໂມງໄປແລ້ວ ຈຶ່ງໃຫ້ລະງັບເອົາໄວ້ ແລ້ວຈຶ່ງສົ່ງຕໍ່ເມື່ອຮອດເຊົ້າຂອງມື້ຖັດມາ.

ໃນໄລຍະການປົກຄອງອິນດູຈີນຝຣັ່ງເສດ (French protectorate of Laos)[2] ນັບແຕ່ປີ 1893-1945 ແຄ້ວນລາວ ກໍໄດ້ພິມສະແຕມທີ່ມີເອກະລັກຂອງແຄ້ວນລາວອອກມານຳໃຊ້ ແລະນຳໃຊ້ຊຸດສະແຕັມໄປສະນີຂອງສາມຊາດອິນໂດຈີນເຂົ້າໃນການໄປສະນີໂທລະເລກ.




Figure 1 Indochinese Stamps with Laotian Subjects

[1] https://th.wikisource.org/wiki/การปกครองแคว้นลาวและเขมรของฝรั่งเศส/ภาคหนึ่ง/บทที่ 5

[2] https://en.wikipedia.org/wiki/French_protectorate_of_Laos

ໃນຮູບສະແຕມຂ້າງເທິງ (Figure 1)[3] ປະກອບມີ ຮູບແມ່ຍິງລາວໃນດວງສະແຕມມູນຄ່າ 5-franc ພິມໃນປີ 1907 ແລະພະທາດຫຼວງວຽງຈັນ ພິມປີ 1927 ໃນຊຸດສະແຕັມອິນໂດຈີນ ຊຶ່ງເປັນສະແຕມຊຸດຕົ້ນໆຂອງອິນໂດຈີນ.




ໃນຫຼັງຊອງຈົດໝາຍດ້ານລຸ່ມນີ້ (Figure 3) ໄດ້ຕິດສະແຕມທີ່ມີຮູບຂອງສາວກຳປູເຈຍ ທີ່ສົ່ງຈາກຫຼວງພະບາງ, ປະເທດລາວ ໄປນະຄອນຫຼວງ ຊີກາໂກ, ຈົດໝາຍດັ່ງກ່າວຖືກປະທັບຕາໄປສະນີເມື່ອວັນທີ 12 ທັນວາ ປີ 1921 ທີ່ຫ້ອງການໄປສະນີ ຫຼວງພະບາງ ແລະ ໄດ້ເດີນທາງຜ່ານ ຮົງກົງ ໂດຍປະທັບຕາໄວ້ເມື່ອວັນທີ 13 ມັງກອນ ແລະ ໃນທີ່ສຸດກໍໄດ້ຮັບທີ່ ຊີກາໂກ ເມື່ອວັນທີ 17 ກຸມພາ 1922 ແລະ ໄປສະນີຈາກຕາເວັນອອກໄກທີ່ສົ່ງທາງພາກພື້ນ (ບາງຄັ້ງກໍໃຊ້ຊ້າງ) ຫຼື ທາງເຮືອໄປຫາທ່າເຮືອທີ່ມະຫາສະມຸດ ຊຶ່ງມີເຮືອກົນໄຟມາຮັບຈົດໝາຍ ສຳລັບການເດີນທາງໄກໄປຍັງອາເມລິກາເໜືອ ຫຼື ເອີລົບ ຈະຊ້າກວ່າຫຼາຍວັນ ກ່ອນທີ່ຈະມີການສົ່ງທາງອາກາດເກີດຂຶ້ນ.

[3] https://sicp-online.org/archive/laos_001.htm




Figure 3. Early Indochinese cover posted from Luang Prabang, Laos.

ໃນໄລຍະທີ່ລາວປະກາດເອກະລາດ (Kingdom of Laos) ນັບແຕ່ປີ 1945-1975 ໃນຊ່ວງຕົ້ນຂອງຊຸມປີດັ່ງກ່າວ ດ້ວຍການນຳພາອັນສະຫລາດສ່ອງໃສຂອງສູນກາງພັກ ແລະ ການຊີ້ນຳໂດຍກົງຂອງຄະນະພັກແຄ້ວນລາວ ຂະບວນການປະຕິວັດປົດປ່ອຍຊາດຢູ່ລາວນັບມື້ຂະຫຍາຍຕົວ ແລະ ກ້າວໄປສູ່ຄຸນນະພາບໃໝ່, ພັກເຮົາໄດ້ນຳພາປະຊາຊົນລຸກຂຶ້ນຍຶດອຳນາດການປົກຄອງຢູ່ວຽງຈັນ ໃນວັນທີ 23 ສິງຫາ 1945 ແລະ ຕໍ່ຈາກນັ້ນມາກໍໄດ້ຍຶດອຳນາດການປົກຄອງຢູ່ຫຼາຍທ້ອງຖິ່ນ, ເປັນຕົ້ນແມ່ນຢູ່ແຂວງສະຫວັນນະເຂດ ເຊິ່ງປະຊາຊົນໄດ້ໂຄ່ນລົ້ມອຳນາດການປົກຄອງເກົ່າ ແລ້ວສ້າງຕັ້ງອຳນາດການປົກຄອງປະຕິວັດຂຶ້ນແທນ ໃນວັນທີ 30 ສິງຫາ 1945 ແລະ ໃນທີ່ສຸດ ໃນວັນທີ 12 ຕຸລາ 1945[4] ລັດຖະບານລາວອິດສະຫລະ ເຊິ່ງເປັນສັນຍາລັກແຫ່ງກ້ອນກຳລັງສາມັກຄີທົ່ວປວງຊົນລາວທັງຊາດ ໄດ້ອອກສະເໜີຕໍ່ໜ້າປະຊາຊົນຢູ່ນະຄອນຫລວງວຽງຈັນ; ລັດຖະບານໄດ້ອອກຖະແຫລງການ **"ປະກາດເອກະລາດ"** ຂອງລາວ, ໃນຖະແຫລງການໄດ້ເວົ້າແຈ້ງກ່ຽວກັບການປ່ຽນແປງອຳນາດການປົກຄອງ, ລຶບລ້າງທຸກສັນຍາທີ່ໄດ້ເຊັນກັບພວກລ່າເມືອງຂຶ້ນແບບເກົ່າໃນເມື່ອກ່ອນ, ປະກາດໃຊ້ລັດຖະທຳມະນູນສະບັບຊົ່ວຄາວ, ປະກາດໃຊ້ທຸງຊາດສາມສີ, ປະກາດສ້າງຕັ້ງລັດຖະບານປະສົມຊົ່ວຄາວ.

ລາວໄດ້ນຳໃຊ້ສະແຕມຂອງອິນໂດຈີນຝຣັ່ງເສດມາຈົນຮອດທ້າຍປີ 1951 ຈາກນັ້ນລາສຊະອານາຈັກລາວຈຶ່ງໄດ້ອອກສະແຕັມຊຸດທຳອິດເປັນຂອງຕົນເອງ ເມື່ອວັນທີ 13 ພະຈິກ 1951 (kingdom of Laos)[5] ພ້ອມຊຸດພາບທີ່ສວຍງາມ 17 ພາບ ທີ່ອອກແບບປະກອບດ້ວຍ ຮູບຂອງກະສັດ ສີສະຫວ່າງວົງ, ເຮືອເທິງນໍ້າຂອງ, ສາວລາວ, ນະຄອນຫຼວງເກົ່າຂອງຫຼວງພະບາງ, ວັດໃນວຽງຈັນ (Figure 8).

---

[4] https://kpl.gov.la/detail.aspx?id=77244

[5] Postage stamps and postal history of Laos - Wikipedia







Figure 8. Early cover posted from Vientiane with first issue of Laotian stamps.

ຕໍ່ມາໃນວັນທີ 13 ເມສາ 1952 ໄດ້ມີການອອກໄປສະນີອາກາດ 4 ສະບັບຊຸດທໍາອິດ ຊຶ່ງມີຮູບສາວລາວທໍ້ຜ້າ ແລະ ວັດພະແກ້ວ (Figure 10), ນອກນີ້ຍັງໄດ້ອອກສະແຕັມເປັນຊຸດຈໍານວນ 6 ດວງ ຊຶ່ງຮູບພາບ ແລະ ໄປສະນີອາກາດຊຸດທໍາອິດເຫຼົ່ານີ້ເປັນສະແຕັມທີ່ສວຍງາມທີ່ສຸດ ທີ່ເຄີຍອອກແບບມາໃນປະເທດລາວ ອອກແບບໂດຍ Marc Leguay ສິນລະປິນທີ່ມີພອນສະຫວັນຢ່າງຍິ່ງ ຊຶ່ງຮັບຜິດຊອບໃນການອອກແບບສະແຕັມລາວຈໍານວນຫຼາຍໃນຊ່ວງສອງທົດສະວັດຕໍ່ມາ.




Figure 10. Composite of Laotian temples designed by Marc Leguay.

ທ່ານ Marc Leguay ເປັນນັກແຕ້ມຊາວຝລັ່ງ ໄດ້ພັດພາກຈາກພໍ່ແມ່ໃນຊ່ວງສົງຄາມໂລກຄັ້ງທີ່ I ແລະ ໄດ້ໄປອາໄສຢູ່ກັບຍ່າໃນເມືອງ Normandy, ລາວໄດ້ເຂົ້າສຶກສາທີ່ໂຮງຮຽນ Evreux ແລະ ສໍາເລັດການສຶກສາໃນປີ 1927 ຈາກນັ້ນໃນປີຕໍ່ໆມາ ລາວກໍໄດ້ຈັດງານວາງສະແດງຮູບແຕ້ມ ຢູ່ຫຼາຍບ່ອນໃນປະເທດຝຣັ່ງ ແລະ ສະເປນ ແລະ ເປັນຊ່ວງເວລາທີ່ລາວໄດ້ພົບກັບ ທ່ານ Salvador Dali ຊຶ່ງໄດ້ແນະນໍາໃຫ້ລາວຮູ້ຈັກກັບ Mr. Pierre André Michel ຜູ້ວ່າຣາຊການອິນໂດຈີນ, ຈາກນັ້ນ 3 ເດືອນຕໍ່ມາ ລາວກໍໄດ້ເຂົ້າມາອາໄສຢູ່ອິນໂດຈີນໃນເດືອນ ທັນວາ ປີ 1935.



IN STUDIO AT HIS HOME, LEGUAY WORKS ON A NEW STAMP DESIGN



Marc leguay ໄດ້ດໍາລົງຊີວິດໃນດິນແດນຂອງຊາວຕາເວັນອອກ ໂດຍມີຄວາມຫວັງວ່າຈະໄດ້ກັບໄປຝຣັ່ງອີກ ແຕ່ລາວໄດ້ຫາຍໂຕໄປຫຼາຍປີ ແລະ ພົບວ່າລາວໄດ້ມາອາໄສຢູ່ໃນປະເທດລາວ ແລະ ໄດ້ຮັບສິດໃຫ້ຢູ່ໃນປະເທດລາວຈາກຜູ້ວ່າຣາຊການອິນໂດຈີນ ນັບຕັ້ງແຕ່ນັ້ນມາລາວໄດ້ຍອມຮັບວ່າ ປະເທດລາວ ຄືກັບປະເທດຂອງຕົນເອງ. ໃນຊ່ວງ 10 ປີຫຼັງຈາກນັ້ນມາ ລາວໄດ້ຊຶມຊັບເອົາຄວາມງາມ ແລະ ຄວາມອຸດົມສົມບູນຂອງທໍາມະຊາດຢູ່ໃນປະເທດລາວຢ່າງດູດດື່ມ ແລະ ຫຼົງໄຫຼການວາດແຕ້ມພາບການດໍາລົງຊີວິດຂອງຄົນລາວ ຈາກນັ້ນຈຶ່ງໄດ້ເປີດໂຮງຮຽນສອນສິນລະປະໃນລາວ ຊຶ່ງມັນໄດ້ເຮັດໃຫ້ລາວ ໄດ້ພົບກັບພັນລະຍາ ແລະ ແຕ່ງງານກັນໃນປີ 1946 ຊື່ວ່າ ນາງ ສັງວານ. ໃນປີ 1947 ລາວໄດ້ຕັດສິນໃຈພາຄອບຄົວເດີນທາງໄປທີ່ນະຄອນຫຼວງວຽງຈັນ ເນື່ອງຈາກກອງກໍາລັງຍີ່ປຸ່ນໄດ້ບຸກເຂົ້າມາໃກ້ອິນໂດຈີນ ຕໍ່ຈາກນັ້ນລາວກໍໄດ້ກາຍມາເປັນສາດສະດາຈານດ້ານການແຕ້ມຮູບ ຊຶ່ງເປັນອາຊີບທີ່ລາວໃຊ້ຈົນເຖິງ ປີ 1975. ຊ່ວງປີ 1951 ລາວໄດ້ເລີ່ມອາຊີບການເຮັດວຽກເປັນນັກອອກແບບສະແຕັມໄປສະນີ ແລະ ຖະນາບັດຂອງລາວ ຊຶ່ງເພິ່ນໄດ້ກາຍມາເປັນທີ່ຮູ້ຈັກຂອງຄົນລາວສ່ວນໃຫຍ່ ຫຼັງຈາກທີ່ປະເທດລາວໄດ້ຮັບເອກະລາດຈາກອິນໂດຈີນ ເນື່ອງຈາກການປ່ຽນແປງທາງການເມືອງໃນປະເທດລາວ ໃນປີ 1975 ທ່ານ Marc Leguay ຈຶ່ງໄດ້ເດີນທາງໄປອາໄສຢູ່ປະເທດໄທ ຈົນເຖິງມື້ສຸດທ້າຍຂອງຊີວິດ ແລະ ເສຍຊີວິດລົງໃນປີ 2001.

ໃນວັນທີ 20 ພຶດສະພາ 1952[6] ການບໍລິການໄປສະນີແບບທົ່ວປວງຊົນ ຂອງປະເທດລາວ ກໍໄດ້ເຂົ້າເປັນສະມາຊິກຂອງສະຫະພາບໄປສະນີສາກົນ (Universal Postal Union-UPU) ແລະ ມາໃນວັນທີ 15 ກໍລະກົດ 1968[7] ກໍໄດ້ເຂົ້າເປັນສະມາຊິກຂອງສະຫະພາບໄປສະນີອາຊີປາຊີຟິກ (Asian-Oceanic Postal Union-APPU) ຊຶ່ງປະເທດລາວ ນອນໃນກຸ່ມ Southern Asia and Oceania.

ພາຍຫຼັງທີ່ປະເທດຊາດໄດ້ຮັບການປົດປ່ອຍ ແລະ ສະຖາປະນາເປັນປະເທດ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ (Lao People's Democratic Republic, Lao PDR) ໃນປີ 1975 ກິດຈະການໄປສະນີແບບທົ່ວ

---

6 https://www.upu.int/en/Universal-Postal-Union/About-UPU/Member-Countries?csid=-1&cid=171#mb--1

7 https://www.appu-bureau.org/members/Laos/

ປວງຊົນ ກໍໄດ້ມີການເຄື່ອນໄຫວ ແລະຂຶ້ນກັບການຊີ້ນຳຂອງ ສປປ ລາວ ເປັນແຕ່ລະໄລຍະ ດັ່ງນີ້:

ປີ 1975–1982 ໂດຍອີງຕາມສະພາບການ ແລະ ເງື່ອນໄຂໃນໄລຍະທີ່ປະເທດຊາດ ຍັງດຳເນີນນະໂຍບາຍເສດຖະກິດແຜນການ ກິດຈະການໄປສະນີແບບທົ່ວປວງຊົນ ແມ່ນຂຶ້ນກັບການຊີ້ນຳຂອງກະຊວງໄປສະນີ ໂທລະຄົມມະນາຄົມ.

ປີ 1982–1986 ພາຍຫຼັງສ້າງຕັ້ງເປັນກະຊວງຂົນສົ່ງ ແລະ ໄປສະນີ ກິດຈະການໄປສະນີດັ່ງກ່າວ ກໍໄດ້ຖືກໂອນໄປຂຶ້ນກັບກະຊວງຂົນສົ່ງ ແລະ ໄປສະນີ.

ປີ 1986 ພັກປະຊາຊົນປະຕິວັດລາວ ໄດ້ດຳເນີນແນວທາງການປ່ຽນແປງໃໝ່ດ້ານເສດຖະກິດ ຊຶ່ງໄດ້ມີການປັບປຸງໂຄງຮ່າງການຈັດຕັ້ງຂັ້ນກະຊວງໃຫ້ກະທັດຮັດເຂົ້າ ໂດຍໄດ້ໂຮມເອົາ 3 ກະຊວງເຂົ້າກັນ ຄື ກະຊວງຂົນສົ່ງ ໄປສະ ນີ, ກະຊວງກໍ່ສ້າງ ແລະ ກະຊວງຄົມມະນາຄົມ ເຂົ້າເປັນກະຊວງດຽວກັນ ແລ້ວສ້າງຕັ້ງເປັນກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ຈາກນັ້ນມາຮອດ ປີ 1987 ກໍໄດ້ໂຮມເອົາກິດຈະການດ້ານໄປສະນີ ແລະ ໂທລະຄົມມະນາຄົມ ເຂົ້າດ້ວຍກັນ ແລ້ວສ້າງຕັ້ງເປັນ ບໍລິສັດໄປສະນີ ແລະ ໂທລະຄົມມະນາຄົມ ຂຶ້ນມາ.

ປີ 1995 ເພື່ອສືບຕໍ່ປະຕິບັດຕາມແນວທາງປ່ຽນແປງໃໝ່ທາງດ້ານເສດຖະກິດຂອງພັກ ຕາມກົນໄກເສດຖະກິດຕະຫຼາດ ໂດຍມີການຄຸ້ມຄອງຂອງລັດ ແລະ ເພື່ອຫັນໄປສູ່ລະບົບໄລ່ລຽງເສດຖະກິດກຸ້ມຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ບໍລິສັດລັດວິສະຫະກິດໄປສະນີ ແລະ ໂທລະຄົມມະນາຄົມ ກໍໄດ້ແຍກອອກເປັນສອງວິສະຫະກິດລັດ ຄື ລັດວິສາຫະກິດປະສົມລາວໂທລະຄົມ ໂດຍການຮ່ວມມື ກັບ ບໍລິສັດໂທລະຄົມມະນາຄົມ ຂອງປະເທດໄທ ເພື່ອໃຫ້ບໍລິການທາງດ້ານການສື່ສານໂທລະຄົມມະນາຄົມ, ສ່ວນກິດຈະການດ້ານການສື່ສານໄປສະນີ ກໍໄດ້ສ້າງຕັ້ງເປັນ **"ລັດວິສາຫະກິດໄປສະນີລາວ"** ຊຶ່ງເປັນວິສາຫະກິດຂອງລັດຮ້ອຍເປີເຊັນ ເຮັດໜ້າທີ່ພາລະບົດບາດໃນການເຄື່ອນໄຫວດຳເນີນທຸລະກິດ "ບໍລິການໄປສະນີແບບທົ່ວປວງຊົນ" ຕາມຄຳສັ່ງເລກທີ 01/ນຍ ລົງວັນທີ 12 ກຸມພາ 1994 ຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບາງຫົວໜ່ວຍທຸລະກິດທີ່ຂຶ້ນກັບການຊີ້ນຳຂອງກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

ມາໃນໄລຍະໃໝ່ ເພື່ອໃຫ້ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມຂອງລັດຖະບານມີຄວາມເຂັ້ມແຂງ ຂະແໜງການໄປສະນີ ກໍໄດ້ອອກກົດໝາຍ **"ວ່າດ້ວຍການໄປສະນີ"** ຂຶ້ນມາເປັນສະບັບທຳອິດ ຊຶ່ງປະກາດໃຊ້ຢ່າງເປັນທາງການໃນວັນທີ 17 ພຶດສະພາ ປີ 2004 ໂດຍສະພາແຫ່ງຊາດ ເພື່ອຫັນວຽກງານໄປສະນີເຂົ້າສູ່ລະບຽບການຫຼາຍຂຶ້ນ.

ປີ 2007 ກົມໄປສະນີ ໂທລະຄົມມະນາຄົມ ຊຶ່ງເຮັດໜ້າທີ່ຄຸ້ມຄອງກິດຈະການໄປສະນີ ແລະ ໂທລະຄົມມະນາຄົມແບບທົ່ວປວງຊົນ ກໍໄດ້ແຍກໂຕອອກມາຈາກກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລ້ວສ້າງຕັ້ງເປັນອົງການໄປສະນີ ໂທລະຄົມມະນາຄົມ ແຫ່ງຊາດ ຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງອົງການໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ ສະບັບເລກທີ 375/ນຍ ລົງວັນທີ 22 ຕຸລາ 2007 ຂອງທ່ານນາຍົກລັດຖະມົນຕີ, ຊຶ່ງມີກົມໄປສະນີເປັນຜູ້ຄຸ້ມຄອງ ແລະ ຊີ້ນຳວຽກງານໄປສະນີ ຢູ່ຂັ້ນສູນກາງ ແລະ ມີບັນດາພະແນກໄປສະນີ ໂທລະຄົມມະນາຄົມປະຈຳແຂວງ ແລະ ນະຄອນຫຼວງ ຄຸ້ມຄອງວຽກງານໄປສະນີຢູ່ຂັ້ນທ້ອງຖິ່ນ ໂດຍມີບໍລິສັດລັດວິສະຫະກິດໄປສະນີລາວ ເຮັດໜ້າທີ່ເປັນຜູ້ໃຫ້ບໍລິການແບບທົ່ວປວງຊົນ ແກ່ສັງຄົມເລື້ອຍມາ ແລະ ໄດ້ມີການປັບປຸງກົດໝາຍວ່າດ້ວຍການໄປສະນີຄືນໃໝ່ ແລະ ໄດ້ປະກາດໃຊ້ໃນວັນທີ 25 ທັນວາ ປີ 2013 ໂດຍສະພາແຫ່ງຊາດ ຊຶ່ງໃນກົດໝາຍສະບັບປັບປຸງນີ້ກໍໄດ້ກຳນົດເອົາທຸກໆ **"ວັນທີ 13 ມີນາ ຂອງແຕ່ລະປີ ເປັນວັນໄປສະນີແຫ່ງຊາດ"**.

ປີ 2017 ອົງການໄປສະນີ ໂທລະຄົມມະນາຄົມ ແຫ່ງຊາດ ກໍໄດ້ຍົກລະດັບເປັນກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 22/ນຍ ລົງວັນທີ 16 ມັງກອນ 2017 ຂອງທ່ານນາຍົກລັດຖະມົນຕີ, ມາໃນ

ໄລຍະໃໝ່ນີ້ ນອກຈາກ ບໍລິສັດລັດວິສະຫະກິດໄປສະນີລາວ ທີ່ເຮັດໜ້າທີ່ຕາງໜ້າພາກລັດໃນການເຄື່ອນໄຫວບໍລິການໄປສະນີທົ່ວປວງຊົນແລ້ວ ຍັງໄດ້ເປີດກວ້າງໃຫ້ພາກເອກະຊົນເຂົ້າມາລົງທຶນ ເພື່ອປະກອບສ່ວນເຄື່ອນໄຫວບໍລິການໄປສະນີເພີ່ມຂຶ້ນ ໂດຍກິດຈະການດ້ານໄປສະນີ ຍັງຢູ່ພາຍໃຕ້ການຄຸ້ມຄອງຂອງກົມໄປສະນີຂັ້ນສູນກາງ ແລະ ມີພະແນກໄປສະນີ ໂທລະຄົມມະນາ ແລະ ການສື່ສານ ປະຈຳແຂວງ ຄຸ້ມຄອງວຽກງານໄປສະນີ ຂັ້ນທ້ອງຖິ່ນ.

ຈົນມາຮອດປີ 2021 ກະຊວງໄປສະນີ ໂທລະຄົມມະນາຄົມ ກໍໄດ້ລວມເອົາວຽກງານເຕັກໂນໂລຊີ ຈາກກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເຂົ້າດ້ວຍກັນ ແລ້ວປ່ຽນຊື່ເປັນກະຊວງເຕັກໂນໂລຊີ ແລະ ການສື່ສານ ຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 625/ນຍ ລົງວັນທີ 22 ຕຸລາ 2021 ຊຶ່ງໜຶ່ງໃນໂຄງປະກອບກົງຈັກຂອງກະຊວງດັ່ງກ່າວ ກໍຍັງແມ່ນກົມໄປສະນີ ທີ່ເຮັດໜ້າທີ່ຄຸ້ມຄອງວຽກງານໄປສະນີຂັ້ນສູນກາງ ແລະ ມີພະແນກເຕັກໂນໂລຊີ ແລະ ການສື່ສານປະຈຳແຂວງ ເຮັດໜ້າທີ່ຄຸ້ມຄອງວຽກງານໄປສະນີຂັ້ນທ້ອງຖິ່ນ.

ມາຮອດປະຈຸບັນ ວຽກງານໄປສະນີ ໄດ້ມີການພັດທະນາ ແລະ ຂະຫຍາຍຕົວອອກຢ່າງກວ້າງຂວາງ ຊຶ່ງມີຜູ້ໃຫ້ບໍລິການທັງວິສະຫະກິດຂອງລັດ ແລະ ວິສະຫະກິດເອກະຊົນເກີດຂຶ້ນເປັນຈຳນວນຫຼາຍ ທີ່ໃຫ້ບໍລິການລະຫວ່າງປະເທດ, ພາຍໃນປະເທດ, ພາຍໃນແຂວງ ແລະ ມີບໍລິການແຈກຢາຍອາຫານເກີດຂຶ້ນ ຊຶ່ງໄດ້ສ້າງວຽກເຮັດງານທຳໃຫ້ແກ່ຊາວໜຸ່ມເປັນຈຳນວນຫຼາຍ, ຊ່ວຍຊຸກຍູ້ສົ່ງເສີມການຜະລິດສິນຄ້າພາຍໃນໃຫ້ຂະຫຍາຍຕົວຫຼາຍຂຶ້ນ, ການຄ້າຂາຍອອນໄລກໍໄດ້ຮັບການຂະຫຍາຍຕົວຢ່າງກວ້າງຂວາງ ແລະ ເປັນທີ່ນິຍົມກັນຫຼາຍຂຶ້ນໃນການແລກປ່ຽນຊື້ຂາຍດ້ວຍການຝາກສິ່ງສິນຄ້າທີ່ທຳການຊື້ຂາຍກັນຜ່ານຕາໜ່າງໄປສະນີ ໄດ້ປະກອບສ່ວນປະຕິບັດພັນທະອາກອນເຂົ້າງົບປະມານແຫ່ງລັດໄດ້ຫຼາຍຮ້ອຍລ້ານຕໍ່ກີບໃນແຕ່ລະປີ ແລະ ປະກອບສ່ວນປະຕິບັດພັນທະຊ່ວຍເຫຼືອສັງຄົມ ໃນການໃຫ້ບໍລິການໃນທົ່ວປວງຊົນເວລາເກີດເຫດຕ່າງໆ ໂດຍສະເພາະ ໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ບໍລິການໄປສະນີ ກໍໄດ້ຊ່ວຍໃນການປະຕິບັດນະໂຍບາຍຮັກສາໄລຍະຫ່າງໃຫ້ແກ່ສັງຄົມໄດ້ດີຂຶ້ນ ໃນການບໍ່ອອກໄປສູ່ສັງຄົມ ແຕ່ນຳໃຊ້ບໍລິການສິ່ງເຄື່ອງຜ່ານອອນລາຍຈາກການໃຫ້ບໍລິການຂອງຂະແໜງການໄປສະນີ.

ສຳລັບ ວິສະຫະກິດໄປສະນີຂອງລັດ ຊຶ່ງສ້າງຕັ້ງຂຶ້ນໃນຊ່ວງທີ່ປະເທດໄດ້ຮັບການສະຖາປະນາ ເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຍັງໄດ້ສືບຕໍ່ເຄື່ອນໄຫວໃຫ້ບໍລິການແກ່ສັງຄົມລາວ ໃນການໃຫ້ບໍລິການໄປສະນີແບບທົ່ວປວງຊົນ ໂດຍປະຕິບັດຕາມພັນທະ ແລະ ລະບຽບການຂອງອົງການສະຫະພາບໄປສະນີສາກົນ ທີ່ລາວເຮົາໄດ້ເຂົ້າເປັນພາຄີມາແຕ່ປີ 1952 ຊຶ່ງມີຄວາມໝາຍສຳຄັນ ທີ່ເປັນຕົວແທນໃຫ້ແກ່ການເຄື່ອນໄຫວວຽກງານໄປສະນີຂອງລາວມາຢ່າງຍາວນານ ແຕ່ປີ 1893 ຮອດປະຈຸບັນລວມອາຍຸໄດ້ 131 ປີ. ຫຼັງຈາກນັ້ນ ພາຍຫຼັງທີ່ວິສະຫະກິດໄປສະນີຂອງລັດ ທີ່ໄດ້ແຍກໂຕອອກຈາກບໍລິສັດລັດວິສະຫະກິດໄປສະນີ ແລະ ໂທລະຄົມມະນາຄົມ ໃນປີ 1995 ແລ້ວກໍໄດ້ປະກອບສ່ວນເຄື່ອນໄຫວໜ້າທີ່ຂອງຕົນເຂົ້າໃນການພັດທະນາເສດຖະກິດ ແລະສັງຄົມຢ່າງຕັ້ງໜ້າ ແຕ່ກໍຍັງມີການຂະຫຍາຍຕົວຊ້າຫຼາຍ ທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງສັງຄົມ ຈຶ່ງໄດ້ມີການປັບປຸງຕື່ມອີກໂດຍການຮ່ວມມືກັບພາກເອກະຊົນ ໂດຍໄດ້ເຊັນສັນຍາຊື້ຂາຍຮຸ້ນ ແລະ ສັນຍາຮ່ວມຮຸ້ນສ້າງຕັ້ງ **"ບໍລິສັດໄປສະນີລາວຈຳກັດ"** ໃນວັນທີ 28 ເມສາ 2022[8] ຊຶ່ງປະຕິບັດຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະ ມົນຕີວ່າດ້ວຍທິດຊີ້ນຳຜົນການປະມູນຊື້-ຂາຍຮຸ້ນ ບໍລິສັດລັດວະສະຫະກິດໄປສະນີລາວ ແລະມອບໃຫ້ກະຊວງການເງິນເຊັນສັນຍາຊື້-ຂາຍຮຸ້ນ ແລະສັນຍາຮ່ວມຮຸ້ນຮ່ວມກັບບໍລິສັດໂລຈິສຕິກເວັນເຈີຈຳກັດ (AIF), ສະບັບເລກທີ 225/ຫສນຍ, ລົງວັນທີ 18 ກຸມພາ 2022 ແລະ ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ 1091/ກງ, ລົງວັນທີ 22 ເມສາ 2022 ວ່າດ້ວຍການອະນຸມັດເຫັນດີໃຫ້ເຊັນສັນຍາຊື້-ຂາຍຮຸ້ນ ບໍລິສັດລັດວິສະຫະ

---

[8] https://www.mof.gov.la/index.php/2022/05/03/sensanya-paisanylao/

ກິດໄປສະນີລາວ ແລະ ສັນຍາຮ່ວມຮຸ້ນ ບໍລິສັດໄປສະນີລາວຈຳກັດ ໂດຍລັດຖະບານຖືຮຸ້ນ 49% ແລະ ເອກະຊົນຖືຮຸ້ນ 51%.

ສັນຍາລັກ ໄປສະນີລາວ ກ່ອນການຮ່ວມຮຸ້ນ

ສັນຍາລັກ ໄປສະນີລາວ ຫຼັງການຮ່ວມຮຸ້ນ

ການຫັນປ່ຽນຄັ້ງນີ້ ກໍເພື່ອພັດທະນາວິສະຫະກິດໄປສະນີຂອງລັດ ໃຫ້ເປັນທັນສະໄໝ ພ້ອມທັງເປັນການສະໜອງຄວາມຮຽກຮ້ອງຕ້ອງການໜ້າທີ່ການເມືອງໃນໄລຍະໃໝ່ ໃນການສືບຕໍ່ພັດທະນາອຸດສາຫະກຳໄປສະນີ ຢູ່ປະເທດເຮົາ ໃຫ້ກາຍເປັນແຮງສະໜັບສະໜູນທາງກົງ ແລະ ທາງອ້ອມໃຫ້ແກ່ການຜະລິດ, ການຄ້າ, ການລົງທຶນ ແລະ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ, ເຊິ່ງວຽກງານດັ່ງກ່າວແມ່ນມີຄວາມສຳຄັນໂດຍກົງຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ເປັນວຽກງານໜຶ່ງ ທີ່ສາກົນໄດ້ເອົາລະດັບການພັດທະນາອຸດສາຫະກຳໄປສະນີ ເປັນໂຕຊີ້ວັດຄ່າໃຊ້ຈ່າຍໃນການຈໍລະຈອນສິນຄ້າຈາກແຫຼ່ງຜະລິດໄປເຖິງຕະຫຼາດ.

"ການບໍລິການໄປສະນີແບບທົ່ວປວງຊົນ" ເປັນປັດໄຈທີ່ຈຳເປັນທີ່ສຸດ ໃຫ້ແກ່ການປະຕິບັດຍຸດທະສາດການປ່ຽນແປງໃໝ່ທາງດ້ານເສດຖະກິດທີ່ມີການເຊື່ອມໂຍ່ງກັບສາກົນ ເພື່ອຊຸກຍູ້ຂະບວນວິວັດແຫ່ງການຜະລິດ ແລະການຜະລິດສຳພາຍໃນປະເທດ ໃຫ້ມີຄວາມເຂັ້ມແຂງ ຕາມທິດຫັນເປັນອຸດສະຫະກຳ ແລະທັນສະໄໝ ໂດຍສະເພາະໃນຍຸກສະໄໝຂອງການຫັນປ່ຽນເສດຖະກິດ-ສັງຄົມ ໄປສູ່ເສດຖະກິດດິຊີຕອນ, "ມີແຕ່ດຳເນີນການຈໍລະຈອນແຈກຢາຍຢ່າງເໝາະສົມເທົ່ານັ້ນ ຈຶ່ງຂະຫຍາຍການຜະລິດ, ໃຊ້ສອຍໄດ້ ແລະ ຈໍລະຈອນຍິ່ງໄວເທົ່າໃດຍິ່ງຮັບໃຊ້ການໃຊ້ສອຍ ແລະການຜະລິດໄດ້ໄວເທົ່ານັ້ນ"[9].

[9] ແນວຄິດ ໄກສອນ ພົມວິຫານ ກ່ຽວກັບການຈໍລະຈອນ ແລະແຈກຢາຍ.